# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 25 ພຶສພາ 2008 ( 05-25-2008 )

---

## <u>ຕຽມພ້ອມໃຫ້ອະພັຍ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ເອເຟໂຊ 4:22-32; ຟີລີໂມນ 1:8-10, 15-18)

<u>ຄຳຖາມແຫ່ງຊີວິດ:</u> ເປັນຫຍັງຂ້າພະເຈົ້າຈຶ່ງຄວນສົນໃຈກ່ຽວກັບການໃຫ້ອະພັຍ?

<u>ຄວາມຈິງໃນພຣະຄັມພີ:</u> ໂດຍການກ່ຽວພັນກັບຄົນອື່ນໃນທາງທີ່ຄ້າຍຄືພຣະຄຣິດ, ຮວມທັງການຊອກຫາຄວາມປອງດອງກັນກັບພວກທີ່ ພວກເຮົາໄດ້ເຮັດຜິດຕໍ່ພວກເຂົາ, ພວກເຮົາສ້າງຄວາມສັມພັນທີ່ພຣະເຈົ້າມີພຣະປະສົງເອົາໄວ້ນັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານສ້າງຄວາມສັມພັນທີ່ໝັ້ນຄົງຢ່າງແທ້ຈິງໂດຍ:

- ການສຳຫລວດເບິ່ງສະພາບການຂອງຮອຍແຕກແຫງຂອງຄວາມສັມພັນທີ່ພວກທ່ານມີໃນຊີວິດ, ແລະ
- ການເລີ້ມຕົ້ນ ຫລືການປ່ຽນແປງຄວາມພຍາຍາມຂອງທ່ານໃໝ່ໃນການຟື້ນແປງຄວາມສັພັນທີ່ມີຮອຍແຕກແຫງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ໃຫ້ສົນທະນາກັນດ້ວຍຄຳຖາມເຫລົ່ານີ້: ທ່ານເຄີຍຖືກຄວາມສັມພັນແຕກຫັກບໍ່?
- ຕາມປົກກະຕິແລ້ວແມ່ນດ້ວຍສາເຫດອັນໃດ ມາຈາກຫຍັງ?
- ເປັນດ້ວຍເຫດໃດຈຶ່ງສ້ອມແຊມຍາກແທ້?
- ຄວາມສັມພັນທີ່ແຕກຫັກແລ້ວຕ້ອງປັບປຸງແກ້ໄຂດ້ວຍການຝຶກຝົນໃນດ້ານການໃຫ້ອະພັຍ.

1. <u>ຈຳໄວ້ວ່າທ່ານເປັນຄົນໃໝ່ແລ້ວ:</u> ( ເອເຟໂຊ 4:22-24)

- ຂໍໃຫ້ນັກຮຽນອາສາສມັກອ່ານ (ເອເຟໂຊ 4:22-24)
- ຖາມວ່າ: ຜູ້ທີ່ມັກໃຫ້ອະພັຍນັ້ນແມ່ນສະພາບມະນຸດໃໝ່ ຫລືສະພາບມະນຸດເກົ່າ?
- ເຮັດໃຫ້ນັກຮຽນມີຄວາມສົນໃຈໃນເຣື່ອງພຣະເຢຊູຄຣິດທີ່ໃຫ້ອະພັຍແກ່ແກ່ຄົນທີ່ເຮັດຜິດຕໍ່ພຣະອົງນັ້ນເພື່ອຫຍັງກັນແທ້. ໃນຖານະທີ່ກັບກາຍມາເປັນຄົນໃໝ່ໃນພຣະຄຣິດແລ້ວ ຈະຕ້ອງເຮັດແນວໃດກ່ຽວກັບການໃຫ້ອະພັຍ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເອເຟໂຊ 4:22-24)

1. ຖອດຖິ້ມສະພາບມະນຸດເກົ່າ ແລະສວມສະພາບມະນຸດໃໝ່ມີຄວາມໝາຍແນວໃດ?
2. ສະພາບມະນຸດໃໝ່ນັ້ນມີລັກສະນະນິສັຍຢ່າງໃດ?
3. ຈະສວມສະພາບມມະນຸດໃໝ່ໃຫ້ກາຍເປັນຄົນທີ່ໃຫ້ອະພັຍໄດ້ຢ່າງໃດ?
4. ເປັນຫຍັງຈຶ່ງວ່າການໃຫ້ອະພັຍເປັນອົງປະກອບທີ່ໝັ້ນຄົງຕໍ່ຄວາມສັມພັນ ແລະໃຫ້ເຂັ້ມແຂງ?

2. <u>ກ່ຽວພັນກັບຄົນອື່ນ ໆ ຢ່າງບໍ່ເຫັນແກ່ຕົວ:</u> (ເອເຟໂຊ 4:22-31)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະທັມ ເອເຟໂຊ 4:25-31
- ນຳພານັກຮຽນໄປສຳຣວດເບິ່ງພຣະທັມ ເອເຟໂຊ 4:25-31ໃນບົດຮຽນ ອີກເທື່ອນຶ່ງ ແລ້ວໃຫ້ເຂົາເຈົ້າຂີດວົງອ້ອມ ທ່າທີ ຫລື ພຶດຕິກັມຊຶ່ງທີ່ບົ່ງບອກວ່າເປັນຄົນໃໝ່ໃນພຣະຄຣິດ. ແມ່ນຫຍັງທີ່ສະແດງອອກເຖິງການທີ່ບໍ່ເຫັນແກ່ຕົວ ເຊັ່ນຕົວຢ່າງ: ( ເວົ້າແຕ່ຄວາມຈິງ) ອົງປະກອບຂອງການບໍ່ເຫັນແກ່ຕົວນັ້ນຄືແນວໃດ ໃຫ້ມີຜູ້ອາສາສມັກອະທິບາຍ. ພວກເຮົາຄວນຈະເອົາໃຈໃສ່ໃນການໃຫ້ອະພັຍ ເພາະວ່າພວກເຮົາໄດ້ສວມສະພາບມະນຸດໃໝ່ໃນພຣະຄຣິດແລ້ວ.
- ໜູນໃຈນັກຮຽນໃຫ້ມີຄວາມສົນໃຈວ່າແມ່ນຫຍັງຜູທີ່ບໍ່ເຫັນແກ່ຕົວຄວນກະທຳເພື່ອເຮັດໃຫ້ຄວາມສັມພັນທີ່ແຕກແຫງທີ່ມີຢູ່ໃຫ້ດີຄືນ.ຖ້າຄົນໃດຄົນນຶ່ງມີຄວາມຕ້ອງການໃຫ້ອະພັຍ,ຄວາມບໍ່ເຫັນແກ່ຕົວຈະເປັນສິ່ງທີ່ໃຫ້ສຳນຶກຜິດ ແລະສາມາດໃຫ້ເປັນຄົນທີ່ໃຫ້ອະພັຍໄດ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເອເຟໂຊ 4:25-31)

1. ພຶດຕິກັມ, ທ່າທີຕ່າງ ໆ ທີ່ສະແດງອອກມາໃຫ້ເຫັນໃນຜູ້ທີ່ຮັບສະພາບມະນຸດໃໝ່ນັ້ນຄືແນວໃດ?
2. ແມ່ນຫຍັງທີ່ບົ່ງບອກລັກສະນະທີ່ທີ່ສະແດງອອກມາຈາກສະພາບມະນຸດຄົນເດີມ?
3. ໃນເມື່ອຜູ້ທີ່ເຊື່ອໄດ້ກະທຳບາບນັ້ນ, ເປັນຫຍັງພຣະວິນຍານບໍຣິສຸດຂອງພຣະເຈົ້າຈຶ່ງມີຄວາມໂສກເສົ້າເສັຽໃຈ?
4. ລັກສະນະທ່າທີຂອງສະພາບມະນຸດຄົນໃໝ່ໄດ້ສະທ້ອນໃຫ້ເຫັນການບໍ່ເຫັນແກ່ຕົວໃນທາງໃດ?

3. <u>ຫາທາງໃຫ້ອະພັຍ:</u> (ເອເຟໂຊ 4:32)

- ຂໍໃຫ້ອາສາສມັກອ່ານພຣະທັມ ເອເຟໂຊ 4:32
- ຖາມນັກຮຽນວ່າ: ດ້ວຍເຫດຜົນອັນໃດຂໍ້ພຣະຄຳນີ້ຈຶ່ງຍົກເອົາເຣື່ອງການໃຫ້ອະພັຍມາໃຫ້ພວກເຮົາ?
- ໜູນໃຈນັກຮຽນໃຫ້ໃຊ້ຂໍ້ມູນຈາກສອງຄຳສັ້ນ ໆ ນີ້ຕອບຄຳຖາມດັ່ງຕໍ່ໄປນີ້: ພວກເຮົາຄວນຈະໃຫ້ການໃຫ້

ອະພັຍກວ້າງໄກອອກໄປຫລາຍປານໃດ? ພວກເຮົາສາມາດໄປໄກ ໆ ໄດ້ບໍ່? ພວກເຮົາຈະໄປຊອກຫາຂໍອະພັຍຕໍ່ຜູ້ທີ່ເຮົາໄດ້ເຮັດຜິດມາແຕ່ດົນນານແລ້ວຢູ່ບໍ່? ຄວາມຜິດພາດສ່ວນໃດທີ່ພວກເຮົາຄວນສາຣະພາບ ແລະຂໍການໃຫ້ອະພັຍ?

- ຖ້າຫາກພວກເຮົາບໍ່ໃຫ້ອະພັຍຕໍ່ກັນແລະກັນແລ້ວ, ຈະຮູ້ວ່າພຣະເຈົ້າຊົງໃຫ້ການອະພັຍແກ່ພວກເຮົາຢ່າງໃດ?

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເອເຟໂຊ 4:32)

1. ແມ່ນຫຍັງທີ່ຜູ້ທີ່ເຊື່ອໃຊ້ສໍາລັບການໃຫ້ອະພັຍຊຶ່ງກັນ ແລະກັນເປັນແບບຢ່າງ?
2. ການນເຂົ້າໃຈໃນການໃຫ້ອະພັຍທີ່ທ່ານໄດ້ຮັບຈາກອົງພຣະຜູ້ເປັນເຈົ້າ ໄດ້ເຮັດໃຫ້ທ່ານມີຄວາມຕັດສິນໃຈໃຫ້ອະພັຍແກ່ຜູ້ທີ່ມີຜິດຕໍ່ກັນທີ່ບໍ່ດີຕໍ່ທ່ານບໍ່?
3. ທ່ານຄວນຈະນໍາເອົາເຣື່ອງພຣະເຈົ້າຂອງທ່ານໄດ້ຊົງໃຫ້ອະພັຍແກ່ໂລກໄປເລົ່າສູ່ຄົນອື່ນຟັງຢ່າງໃດແດ່?

4. <u>ການກໍ່ສ້າງຂຶ້ນໃໝ່ ຫລືແກ້ແຄ້ນ? ສຶກສາຄະດີ:</u> (ຟີເລໂມນ 1:8-10, 15-18)

- ຂໍໃຫ້ອາສາສມັກອ່ານພຣະທັມ ຟີເລໂມນ 1:8-10, 15-18
- ຖາມວ່າ: ເປັນຫຍັງໂປໂລຈຶ່ງເອີ້ນໂອເນຊີໂມເປັນລູກຂອງລາວ?
- ໂປໂລຂໍຮ້ອງໂອເນຊີໂອໃຫ້ເຮັດຫຍັງ? ເປັນຫຍັງລາວຈຶ່ງຂານອາສາຈ່າຍໜີ້ທີ່ໂອເນຊີໂມຕິດຟີເລໂມນ?

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ຟີເລໂມນ 1:8-10, 15-18)

- ໂປໂລໄດ້ສັ່ງຄວາມໄປຫາຟີເລໂມນໃຫ້ທໍາຄວາມດີຕໍ່ໂອເນຊີໂມຢ່າງໃດ?
- ການໃຫ້ອະພັຍມີຄວາມໝາຍໃນການເຮັດໃຫ້ສິ່ງທີ່ຜິດລົດລົງ ຫລືເມີນເສີຍ?
- ເປັນຫຍັງຟີເລໂມນຈຶ່ງອະພັຍໃຫ້ໂອເນຊີໂມໄດ້?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ຕ້ອງຍອມໃຫ້ພຣະຄຣິດປ່ຽນແປງຊີວິດແຕ່ລະວັນ.
- ຊີວິດດໃໝ່ໃນພຣະຄຣິດມີຄວາມໝາຍບໍ່ພຽງແຕ່ລະຍະຜ່ານມາ ແລະເປັນປະຈໍາຂອງການເຊື່ອໄວ້ວາງໃນໃນພຣະຄຣິດເທົ່ານັ້ນ, ແຕ່ໃຫ້ມີຊີວິດທີ່ພ້ອມທີ່ຈະໃຫ້ພຣະຄຣິດທໍາງານຜ່ານຕົວທ່ານດ້ວຍ.
- ບັນດາຜູ້ທີ່ເຊື່ອທັງຫລາຍໄດ້ໃຫ້ອະພັຍຊຶ່ງກັນ ແລະກັນເໝືອນດັ່ງພຣະຄຣິດໄດ້ຊົງໃຫ້ອະພັຍໃຫ້ເຂົາມີສິດເສຣີພາບ, ໃຫ້ຈິດໃຈມີຄວາມສງົບສຸກ, ຢ່າງກະຕືລືລົ້ນ, ແລະໂດຍເກີດຂຶ້ນເອງຕາມທັມມະຊາດ.
- ຄວບຄຸມການອິດສາແທນການຍຶດໝັ້ນຂອງການໃຫ້ອະພັຍ ເປັນການບໍ່ເໝາະສົມຕໍ່ຄົນຂອງພຣະເຈົ້າ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )